ນ້ຳເບີ້ແລະຊື່ຂອງຖນົນ (ໃຫ້ທ່ານເບິ່ງຕົວຢ່າງຂ້າງລຸ່ມນີ້)

______________________________

______________________________

______________________________

ເມືອງນ້ອຍ, ເມືອງໃຫຍ, ບ້ານຫລືເຂດທ້ອງຖິ່ນ, ເຂດສຸ້ມຄອງຂອງຊາວອິນດຽນ (Indian reserve)

______________________________

______________________________

ແຂວງ/ດິນແດນ

______________________________

ເລກໂຄດໄປສະນີ (Postal Code)

________ ________

---

**47.** ບຸກຄົນຜູ້ນີ້ໄປທຳງານປະຈຳວັນໄດ້ດ້ວຍວິທີໃດ?

*ຖ້າຜູ້ກ່ຽວໄດ້ໃຊ້ວິທີທາງການເດີນທາງໄປທຳງານຂອງຜູ້ກ່ຽວຫລາຍກ່ວາວິທີທາງດຽວ, ຈົ່ງໃຫ້ທ່ານຕອບຫລື ບອກວິທີທາງອື່ນທີ່ຜູ້ກ່ຽວໄດ້ໃຊ້ໄປທຳງານຫລາຍກ່ວາວິທີທາງອື່ນແບບລາຍລະອຽດ:*

- ❍ ຂັບລົດສ່ວນຕົວ, ລົດໃຫຍ່ຫລືລົດວັນໄປທຳງານດ້ວຍຕົນເອງ
- ❍ ໄປນຳລົດນ້ອຍທັມມະດາ, ລົດໃຫຍ່ຫລືລົດວັນກັບຄົນອື່ນແບບຄົນໂດຍສານ
- ❍ ໄປນຳສາທາຣະນະ ເຊັ່ນຕົວຢ່າງ: ລົດເມ ,ລົດເມແລະລົດໄຟໃຕ້ດິນ ຫລືທາງເຮືອ
- ❍ ຍ່າງໄປທຳງານ
- ❍ ຂັບລົດຖີບໄປທຳງານ
- ❍ ຂັບລົດຈັກໄປທຳງານ
- ❍ ຈ້າງລົດແທກຊີໄປທຳງານ
- ❍ ຫລືໃຊ້ວິທີທາງອື່ນໄປທຳງານ

---

**48.** (a) ບຸກຄົນຜູ້ໄດ້ໃຊ້ພາສາໃດຫລາຍກ່ວາຫມູ່ໃນເວລາຜູ້ທຳວຽກງານ?

- ❍ ພາສາອັງກິດ
- ❍ ພາສາຝຣັ່ງເສດ

ຖ້າໃຊ້ພາສາອື່ນ *ຈົ່ງບອກລາຍລະອຽດ*

______________________________

(b) ບຸກຄົນຜູ້ນີ້ໄດ້ໃຊ້ພາສາຫຍັງແດ່ໃນເວລາຜູ້ກ່ຽວທຳງານແຕ່ລະວັນ?

- ❍ ບໍ່ໄດ້ໃຊ້ພາສາອື່ນ
- ❍ ແມ່ນ, ຜູ້ກ່ຽວໄດ້ໃຊ້ພາສາອັງກິດ
- ❍ ແມ່ນ, ຜູ້ກ່ຽວໄດ້ໃຊ້ພາສາຝຣັ່ງເສດ

ແມ່ນ, ຖ້າໃຊ້ພາສາອື່ນ *ຈົ່ງບອກລາຍລະອຽດ*

______________________________

---

**49.** ບຸກຄົນຜູ້ນີ້ໄດ້ທຳງານຈັກອາທິດໃນປີ ໒໐໐໕?

*ຈົ່ງບອກຈຳນວນອາທິດທັງຫມົດທີ່ຜູ້ກ່ຽວໄດ້ທຳງານເພື່ອຄ່າແຮງງານແບບເປັນເງິນເດືອນ ຫລືວ່າແບບວຽກງານທຸຣະກິດການຄ້າຂາຍຂອງຕົນເອງ ເພື່ອຫາລາຍໄດ້ແຕ່ລະອາທິດໃນປີ ໒໐໐໕.*

*ຈຳນວນອາທິດຕ້ອງຮ່ວມເຂົ້າກັນທັງຫມົດຄື:*

- *ຈຳນວນອາທິດທີ່ຜູ້ກ່ຽວໄດ້ໃຊ້ໄປທ່ອງທ່ຽວພັກຜ່ອນ ຫລືເວລາຜູ້ກ່ຽວໄດ້ເຈັບປ່ວຍທຳງານບໍ່ໄດ້;*
- *ຈຳນວນອາທິດທີ່ຜູ້ກ່ຽວໄດ້ໃຊ້ເພື່ອການທຳງານຂອງຜູ້ກ່ຽວແບບເຕັມເວລາ;*
- *ຈຳນວນອາທິດທີ່ຜູ້ກ່ຽວໄດ້ໃຊ້ເພື່ອການທຳງານເພື່ອລາຍໄດ້ແບບເປັນຊົ່ວໂມງ, ແບບເງິນເດືອນ, ແບບລາຍໄດ້ເປັນແບບເງິນແຖມຫລືເງິນຕິບ, ແບບຄ່ານາຍຫນ້າ;*
- *ຈຳນວນອາທິດທີ່ຜູ້ກ່ຽວໄດ້ໃຊ້ເພື່ອການທຳງານສຳຫລັບສ່ວນຕົວຂອງຜູ້ກ່ຽວ;*
- *ຈຳນວນເວລາຫລືອາທິດທີ່ຜູ້ກ່ຽວໄດ້ໃຊ້ເພື່ອການທຳງານດ້ານການປູກຝັງທຳໄຮ່ນາແບບຄອບຄົວຂອງຕົນເອງ ຊຶ່ງບໍ່ການຈ່າຍຄ່າແຮງງານແບບເປັນປົກກະຕິໃຫ້ຜູ້ກ່ຽວ.*

❍ ຖ້າຕອບ ບໍ່ ➔ **ໃຫ້ທ່ານຂ້າມໄປຕອບຄຳຖາມຂໍ້ ໕໑**

**ຫລື**

__________ ⬅ ໃຫ້ທ່ານບັນທຶກຈຳນວນອາທິດທັງຫມົດ

---

**50.** ໃນລະຍະເວລາອາທິດທັງຫມົດທີ່ບຸກຄົນຜູ້ນີ້ໄດ້ທຳວຽກງານໃນປີ ໒໐໐໕ ຜ່ານມານັ້ນ ເປັນວຽກງານເຕັມເວລາ ຫລືເປັນວຽກງານແບບບໍ່ເຕັມເວລາ?

*ຈົ່ງໃຫ້ຄຳຕອບພຽງອັນດຽວເທົ່ານັ້ນ*

- ❍ ຜູ້ກ່ຽວໄດ້ທຳງານເຕັມເວລາ ສາມສິບຊົ່ວໂມງຕໍ່ອາທິດນຶ່ງ ຫລືຫລາຍກ່ວາ
- ❍ ຜູ້ກ່ຽວໄດ້ທຳງານແບບບໍ່ເຕັມເວລາ ສາມສິບຊົ່ວໂມງຕໍ່ອາທິດນຶ່ງ ຫລນ້ອຍກ່ວາ

---

## ລາຍໄດ້ປະຈຳປີ໒໐໐໕

**51.** ເພື່ອເປັນການປະຢັດເວລາຂອງທ່ານ ແຕ່ລະບຸກຄົນມີສິດສ່ວນຕົວເພື່ອມອບສິດໃຫ້ແກ່ທາງຫ້ອງການສະຖິຕິ ສຳມະໂນຄົວການາດາ ໃຊ້ຂໍ້ມູນກ່ຽວກັບລາຍໄດ້ສ່ວນຕົວແຕ່ລະປີຂອງແຕລະບຸກຄົນຊຶ່ງໄດ້ຖືກປະກອບຄິດໄລ່ຢູ່ໃນໃບເອກະສານສຳຫລວດການແຈ້ງລາຍໄດ້ແລະການຈ່າຍພາສີສ່ວນຕົວຂອງແຕ່ລະບຸກຄົນຮຽບຮ້ອຍແລ້ວ ນັ້ນໂດຍບໍ່ຈຳເປັນຈະຕ້ອງໄດ້ຕອບຄຳຖາມຂໍ້ ໕໔ ຕໍ່ໄປ.

- *ຈົ່ງໃຫ້ທ່ານເຂົ້າໃຈວ່າ ການເລືອກຕອບ ຫລືບໍ່ຕອບຄຳຖາມຂໍ້ ໕໔ ດັ່ງທີ່ໄດ້ກ່າວໃນຂ້າງເທິງນີ້ຈະຖືກໃຊ້ໄດ້ສຳຫລັບແຕ່ລະບຸກຄົນຜູ້ທີ່ໄດ້ທຳໃບລາຍງານລາຍໄດ້ແລະຈ່າຍພາສີສ່ວນຕົວປະຈຳແຕ່ລະທ້າຍປີຄືນັບຈາກວັນທີນຶ່ງ ເດືອນ ມັງກະຣາ ຫາ ວັນທີສາມສິບເອັດ ເດືອນ ທັນວາ ປີ ໒໐໐໕ ເທົ່ານັ້ນ.*
- *ຈົ່ງໃຫ້ທ່ານເຂົ້າໃຈວ່າ ທາງຫ້ອງການສະຖິຕິການາດາຈະໃຊ້ເອກະສານການລາຍງານແລະການຈ່າຍພາສີສ່ວນຕົວ ຂອງທ່ານເພື່ອບັນທຶກຂໍ້ມູນລາຍໄດ້ລາຍຈ່າຍສ່ວນຕົວຂອງແຕ່ລະບຸກຄົນເທົ່ານັ້ນ.*

ບຸກຄົນຜູ້ນີ້ໄດ້ມອບສິດໃຫ້ແກ່ຫ້ອງການຂອງສະຖິຕິສຳມະໂນຄົວການາດາໃຊ້ຂໍ້ມູນກ່ຽວກັບລາຍໄດ້ແລະການ ຈ່າຍພາສີສ່ວນຕົວຂອງຜູ້ກ່ຽວສຳຫລັບສົກປີ ໒໐໐໕ ຊຶ່ງນັບຈາກວັນທີ ໑ ເດືອນ ມັງກະຣາ ຫາ ວັນທີ ໓໑ ເດືອນ ທັນວາ ປີ ໒໐໐໕ ຮຽບຮ້ອຍແລ້ວບໍ່?

❍ ແມ່ນ, ຜູ້ກ່ຽວໄດ້ທຳ ➔ ຖ້າບຸກຄົນຜູ້ທີ່ນຶ່ງໄດ້ຕົກລົງທຳ, **ໃຫ້ທ່ານຂ້າມໄປຕອບ ຄຳຖາມຂໍ້໕໓.**

❍ ຖ້າຕອບ ບໍ່ໄດ້ທຳ ➔ **ໃຫ້ທ່ານຕອບຄຳຖາມຂໍ້ ໕໔**

---

**52.** ໃນລະຍະເວລາປີທີ່ຜ່ານມາ ຈາກວັນທີ ໑ ເດືອນ ມັງກະຣາ ຫາ ວັນທີ ໓໑ ເດືອນ ທັນວາ ປີ໒໐໐໕ ບຸກຄົນຜູ້ນີ້ໄດ້ ຮັບເງິນຫລືມີລາຍໄດ້ຈາກໃສແດ່? ຈົ່ງໃຫ້ທ່ານຕອບຄຳຖາມຕໍ່ໄປນີ້ະ

*ຖ້າທ່ານຕອບ "ແມ່ນ" (ຜູ້ກ່ຽວໄດ້ຮັບເງິນມີລາຍໄດ້ຈາກບ່ອນອື່ນ) ຫລື ຖ້າຕອບ "ບໍ່ແມ່ນ" (ຜູ້ກ່ຽວບໍ່ໄດ້ຮັບເງິນບໍ່ມີລາຍໄດ) ຈາກບ່ອນໃດ. ຖ້າວ່າ ມີລາຍໄດ້ຈົ່ງໃຫ້ທ່ານບັນທຶກເປັນຕົວເລກຈຳນວນເງິນນ້ອຍ ຫລື ຫລາຍເທົ່າໃດ ແລະຖ້າວ່າເສັຽກຳໄລຫລືຂາດ ທຶນກໍ່ໃຫ້ທ່ານບັນທຶກເປັນຕົວເລກຈຳນວນເງິນນ້ອຍຫລືຫລາຍ ເທົ່າໃດໃນສົກປີ ໒໐໐໕ທີ່ຜ່ານມາ.*

### ຊະນິດວຽກງານທີ່ໄດ້ຮັບຄ່າແຮງງານ ຫລືເປັນເງິນເດືອນະ

(a) **ຈຳນວນເງິນຄ່າແຮງງານເປັນແບບຊົ່ວໂມງ,** *ແບບເງິນເດືອນ, ແບບເງິນຄ່ານາຍຫນ້າ, ແບບເງິນລາງວັນ, ແບບເງິນເພີ່ມເຕີມຫລືເງິນຕິບ, ລາຍໄດ້ຈາກຜົນກຳໄລຢ່າງອື່ນ ຫລືວ່າເປັນລາຍໄດ້ແບບເງິນດອກເບັ້ຽ ຫລື ລາຍໄດ້ທີ່ໄດ້ຮັບຈາກລັຖບານແລະບໍຣິສັດເອກກະຊົນຕ່າງ ໆ ກ່ອນຈະຫັກລາຍຈ່າຍອອກຈາກລາຍໄດ້ຈຳນວນ ທັງຫມົດຂອງປີດັ່ງກ່າວ.*

❍ ແມ່ນ *ຖ້າຕອບ "ແມ່ນ" ຈົ່ງບອກຈຳນວນຢູ່ຊ່ອງວ່າງລຸ່ມນີ້*

↳ $ ___ ___ ___ .00

❍ ບໍ່

---

### ທຳວຽກງານທຸຣະກິດແບບສ່ວນຕົວ

(b) **ລາຍໄດ້ຍອດ** *(ເອົາຈຳນວນລາຍຈ່າຍທັງຫມົດຫັກອອກຈາກຈຳນວນລາຍໄດ້ທັງຫມົດ) ຈາກວຽກງານ ທຸຣະກິດການຄ້າຂາຍຕ່າງ ໆ ຊຶ່ງຮ່ວມກັບລາຍໄດ້ຈາກການກະເສດປູກຝັງ ຈາກການຊ່ວຍເຫືລອບັນເທົາທຸກ ຈາກລັຖບານເພື່ອຊຸກຍູ້ສົ່ງເສີມການຜະລິດຜົນແລະການຕະລາດ ຫລືລາຍໄດ້ຈາກບໍຣິສັດປະກັນໄພແລະລາຍ ໄດ້ມາຈາກທາງອື່ນໆ*

❍ ແມ່ນ *ຖ້າຕອບ "ແມ່ນ" ຈົ່ງບອກຈຳນວນລາຍໄດ້ຢູ່ຊ່ອງວ່າງລຸ່ມນີ້*

↳ $ ___ ___ ___ .00

❍ ຖ້າເສັຽ

❍ ບໍ່ມີລາຍໄດ່ຈາກບ່ອນໃດ

(c) **ລາຍໄດ້ຍອດ** (ແມ່ນລາຍໄດຫລັງຈາກເອົາຈຳລາຍຈ່າຍທັງຫມົດມາລົບອອກຈາກຈຳນວນລາຍໄດ້ທັງຫມົດ) **ຈາກການທຳວຽກງານດ້ານທຸຣະກິດແລະການຄ້າຂາຍຢ່າງອື່ນຊຶ່ງບໍ່ແມ່ນລາຍໄດ້ຈາກການທຳໄຮ່ນາປູກຝັງ, ເຊັ່ນຕົວຢ່າງ: ລາຍໄດ້ຈາກທຸຣະກິດດ້ານການບໍຣິການແລະການຊື້ຂາຍສິ່ງຕ່າງໆ.**

❍ ແມ່ນ *ຖ້າຕອບ "ແມ່ນ" ຈົ່ງບອກຈຳນວນລາຍໄດ້ຢູ່ຊ່ອງວ່າງລຸ່ມນີ້*

↳ $ ___ ______ ______ .00

❍ ຖ້າເສັຽ

❍ ບໍ່ມີລາຍໄດ້ຈາກບ່ອນໃດ

---

## ລາຍໄດ້ຈາກລັດຖະບານ:

(d) **ລາຍໄດ້ຄ່າພາສີເບັຽລ້ຽງເດັກນ້ອຍປະຈຳປີ** (ຈາກລັດຖະບານກາງ, ລັດຖະບານແຂວງ, ລັດຖະບານດິນແດນ)

❍ ແມ່ນ *ຖ້າຕອບ "ແມ່ນ" ຈົ່ງບອກຈຳນວນລາຍໄດ້ຢູ່ຊ່ອງວ່າງລຸ່ມນີ້*

↳ $ ___ ______ ______ .00

❍ ບໍ່ມີລາຍໄດ້ແບບໃດຈາກບ່ອນໃດ

(e) ເງິນເບັ້ຽລ້ຽງຄົນເຖົ້າເສັຽອົງຄະ, ເງິນຊ່ວຍເຫືລອເພີ້ມເຕີມລາຍໄດ້, ເງິນລາຍເບັ້ຽລ້ຽງປະຈຳເດືອນ ແລະ ເງິນລາຍໄດ້ປະຈຳເດືອນສຳຫລັບຜູ້ທີ່ຍັງມີຊີວິດຢູ່ ຫລືເງິນແມ່ມ້າຍຫລືເງິນພໍ່ມ້າຍ *ຈາກລັດຖະບານກາງເທົ້ານັ້ນ (ສຳຫລັບເງິນລາຍໄດ້ເພີ້ມເຕີມຈາກລັດຖະບານແຂວງຕ້ອງລາຍ ງານຢູ່ໃນຂໍ້ຄຳຖາມທີ່ແປດ (h))*

❍ ແມ່ນ *ຖ້າຕອບ "ແມ່ນ" ຈົ່ງບອກຈຳນວນລາຍໄດ້ຢູ່ຊ່ອງວ່າງລຸ່ມນີ້*

↳ $ ___ ______ ______ .00

❍ ບໍ່ມີລາຍໄດ້ຈາກບ່ອນໃດ

(f) ລາຍໄດ້ຈາກເງິນເບັ້ຽບຳນານຜູ້ເຖົ້າ, ຈາກລັດຖະບານການາດາແລະລັດຖະບານແຂວງເກເບັກ (Canada Pension Plan or Quebec Pension Plan).

❍ ແມ່ນ *ຖ້າຕອບ "ແມ່ນ" ຈົ່ງບອກຈຳນວນລາຍໄດ້ຢູ່ຊ່ອງວ່າງລຸ່ມນີ້*

↳ $ ___ ______ ______ .00

❍ ບໍ່ມີລາຍໄດ້ຈາກບ່ອນໃດ

(g) **ລາຍໄດ້ຈາກເງິນອ່າງງານ** *(ແມ່ນຈຳນວນລາຍໄດ້ທັງຫມົດລົບອອກຈາກຄ່າພາສີ)*

❍ ແມ່ນ *ຖ້າຕອບ "ແມ່ນ" ຈົ່ງບອກຈຳນວນລາຍໄດ້ຢູ່ຊ່ອງວ່າງລຸ່ມນີ້*

↳ $ ___ ______ ______ .00

❍ ບໍ່ມີລາຍໄດ້ຈາກບ່ອນໃດ

(h) ລາຍໄດ້ຈາກລັດຖະບານແບບອື່ນໆ, ເຊັ່ນຕົວຢ່າງ: ເງິນເພີ່ມເຕີມໃຫ້ບຸກຄົນຜູ້ທີ່ທຳງານມີລາຍໄດ້ນ້ອຍ ຫລື ເປັນເງິນຊ່ວຍເຫລືອ, ເປັນເງິນຈີແອສທີ ຫລືຄິວແດສທີ ຫລື ເອດສແສທີ, ເງິນພາສີເຄຣດິດຈາກລັດຖະບານ ແຂວງ, ເງິນເຈັບປ່ວຍ, ເງິນນັກລົບເກົ່າ, ເງິນຊ່ວຍເຫລືອສັງເຄາະ.

❍ ແມ່ນ *ຖ້າຕອບ "ແມ່ນ" ຈົ່ງບອກຈຳນວນລາຍໄດ້ຢູ່ຊ່ອງວ່າງລຸ່ມນີ້*

↳ $ ___ ______ ______ .00

❍ ບໍ່ມີລາຍໄດ້ຈາກບ່ອນໃດ

---

## ລາຍໄດ້ຈາກການລົງທຶນທຸລະກິດຢ່າງອື່ນ:

(i) ລາຍໄດ້ຈາກເງິນສ່ວນແບ່ງກຳໄລຈາກການລົງທຶນຊື້ຫຸ້ນສ່ວນສະຕອກ, ເງິນດອກເບັ້ຽ ຈາກການລົງທຶນຊື້ຫຸ້ນສ່ວນບອນ ແລະໃບພັນທະບັດອອມສິນ, ແລະລາຍໄດ້ຈາກການລົງທືອື່ນ ໆ *ເຊັ່ນຕົວຢ່າງ ລາຍໄດ້ຈາກຄ່າເຊົ່າດິນແລະເຮືອນ, ດອກເບັ້ຽຈາກການລົງທຶນຊື້ຫລືຂາຍເຮືອນ. ຈົ່ງຢ່າຮ່ວມກັບ ລາຍໄດ້ຫລືລາຍຈ່າຍຈາກຈຳນວນເງິນທຶນໃນດ້ານທຸຣະກິດ.*

❍ ແມ່ນ *ຖ້າຕອບ "ແມ່ນ" ຈົ່ງບອກຈຳນວນລາຍໄດ້ຢູ່ຊ່ອງວ່າງລຸ່ມນີ້*

↳ $ ___ ______ ______ .00

❍ ຖ້າເສັຽ

❍ ບໍ່ມີລາຍໄດ້ຈາກບ່ອນໃດ

(j) ເງິນເບັ້ຽບຳນານຄົນເກົ້າ, ເງິນອອມສິນເພື່ອເວລາເກົ້າແກ່, ຮ່ວມກັນກັບເງິນອອມສິນ *ອາອາແອສປີ (RRSP) ແລະ ເງິນອາອາໄອແອຟ (RRIF). ຈົ່ງຢ່າຮ່ວມກັບຈຳນານເງິນທີ່ທ່ານໄດ້ຖອນອອກຈາກເງິນອອມສິນເບັ້ຽບຳນານຜູ້ເກົ້າ ອາອາແອສປີ (RRSP).*

❍ ແມ່ນ *ຖ້າຕອບ "ແມ່ນ" ຈົ່ງບອກຈຳນວນລາຍໄດ້ຢູ່ຊ່ອງວ່າງລຸ່ມນີ້*

↳ $ ___ ______ ______ .00

❍ ບໍ່

(k) **ລາຍໄດ້ຈາກທາງອື່ນໆ,** *ເຊັ່ນຕົວຢ່າງ: ເງິນເບັ້ຽລ້ຽງໃຫ້ຜົວຫລືເມັຽຫລັງຈາກຢ່າຮ້າງຈາກກັນ, ເງິນຄ່າ ສົ່ງເສີມໃຫ້ລູກແລະເງິນທຶນສຶກສາ.*

❍ ແມ່ນ ຖ້າຕອບ "ແມ່ນ" ຈົ່ງບອກຈຳນວນລາຍໄດ້ຢູ່ຊ່ອງວ່າງລຸ່ມນີ້

↳ $ ___ ______ ______ .00

❍ ບໍ່ມີລາຍໄດ້ຈາກບ່ອນໃດ

---

จำนวนลายได้ทั้งหมดในปี **2005**

- ❍ แม่น *ถ้าตอบ "แม่น" จั่งบอกจำนวนลายได้ทั้งหมดะ*

↳ $ ____ ________ ________ .00

- ❍ ถ้าเสัย

- ❍ บ่มีลายได้จากบ่อนใด

---

จำนวนค่าพาสีลายได้ส่วนตัวซึ่งผู้ກ່ຽວໄດ້ຈ່າຍໃຫ້ລັດຖະບານກາງ, ລັດຖະບານແຂວງ ແລະ ລັດຖະບານດິນແດນ ຫລືລັດຖະບານເຂດທ້ອງຖິ່ນທັງຫມົດໃນປີ ໒໐໐໕ ມີຈຳນວນະ

▶ $ ____ ________ ________ .00

---

**ຄຳຖາມດັ່ງຕໍ່ໄປນີ້ເພື່ອສຳຫລັບທຸກຄົນຜູ້ທີ່ອາໄສຢູ່ທີ່ຢູ່ແຫ່ງນີ້ ແລະຮ່ວມກັບບຸກຄົນຜູ້ທີ່ໄດ້ອາໄສຢູ່ທີ່ຢູ່ແຫ່ງນີ້ເປັນເວລາ ນ້ອຍກ່ວາສິບຫ້າປີ. ຖ້າທ່ານຕອບຄຳຖາມແຕ່ລະຄຳເພື່ອຄົນອື່ນ ຈົ່ງໃຫ້ທ່ານປຶກສາກັບບຸກຄົນຜູ້ກ່ຽວແບບລາຍລະອຽດ ກ່ອນຈະຕອບຄຳຖສມແຕ່ລະຄຳຖາມດັ່ງຕໍ່ໄປນີ້:**

**53.** ຈົ່ງໃຫ້ທ່ານເຂົ້າໃຈວ່າ ກົດຫມາຍສະຕິຖິການາດາໄດ້ໃຫ້ຄໍ້າປະກັນແລະປ້ອງກັນຄວາມຫລັບສ່ວນຕົວແລະຂໍ້ມູນສ່ວນຕົວຂອງແຕ່ລະບຸກຄົນຢ່າງເຂັ້ມງວດ. ຈົ່ງໃຫ້ທ່ານເຂົ້າໃຈວ່າ ຖ້າທ່ານຕອບຄຳຖາມຂໍ້ນີ້ ວ່າ: "ແມ່ນ" ຫລືວ່າ "ຕົກລົງຮັບຮູ້" ໃຫ້ສິດແກ່ທາງສະຕິຖິການາດານຳເອົາຂໍ້ມູນສ່ວນຕົວຂອງທ່ານຫລືຂອງບຸກຄົນໃດບຸກຄົນນຶ່ງໄດ້ຕາມທີ່ຕ້ອງການຕໍ່ໄປໄດ້ຫລັງຈາກເກົ້າສິບສອງປີຂ້າງຫນ້າ ຫລັງຈາກປີ ໒໐໐໖ ຫລື ໃນປີ ໒໐໙໘. ແຕ່ວາຖ້າທ່ານຕອບຄຳຖາມນີ້ວ່າ: "ບໍ່" ແປວ່າທ່ານບໍ່ຍອມມອບສິດໃຫ້ທາງສະຕິຖິການາດາ ໃຊ້ຂໍ້ມູນສ່ວນຕົວຂອງທ່ານໄດ້ຕາມທີ່ຕ້ອງການ ຫລືບໍ່ມີສິດໃຊ້ຫລືສົ່ງຂໍ້ມູນສ່ວນຕົວຂອງທ່ານໃຫ້ອົງການ ຈັດຕັ້ງໃດທັງສິ້ນຫລັງຈາກເກົ້າສິບສອງປີຂ້າງຫນ້າ.

ທາງສະຕິຖິການາດາ ຢາກຮູ້ວ່າ ບຸກຄົນຜູ້ນີ້ໄດ້ຕົກລົງໃຫ້ອະນຸຍາດແກ່ສະຕິຖິການາດາມີສິດພິມຫລືນຳເອົາຂໍ້ມູນສ່ວນຕົວຂອງບຸກຄົນຜູ້ກ່ຽວໃຫ້ຄົນອື່ນ ຫລືໃຫ້ອົງການຈັດຕັ້ງອື່ນ ໆໄດ້ບໍ່?

- ❍ ແມ່ນ, ຕົກລົງມອບສິດໃຫ້
- ❍ ບໍ່, ບໍ່ຕົກລົງມອບສິດໃຫ້

ຂັ້ນທີ່ຫົກ **(F):**

**ຈົ່ງໃຫ້ທ່ານຕອບຄຳຖາມຈາກຂໍ້ H1 ຫາຄຳຖາມຂໍ້ H8 ທີ່ກ່ຽວກັບຫລັກສະນະຮູບຮ່າງຂອງເຮືອນຫລືຫ້ອງແຖວຂອງທ່ານອາໄສຢູ່ໃນປັດຈຸບັນເປັນລາຍລະອຽດ.**

*ເປັນເຮືອນຫລືເປັນແບບຫ້ອງແຖວຕ້ອງມີປະຕູຫລືທາງເຂົ້າໄປໃນເຮືອນຫລືຫ້ອງແຖວແບບສ່ວນຕົວ ໂດຍຕົງ ຫລືຕ້ອງມີທາງເຂົ້າໄປໃນເຮືອນຮ່ວມກັນກັບຄົນອື່ນຢູ່ໃນຕຶກຫລືອາຄານໃຫ່ຍຮ່ວມກັນ, ແຕ່ວ່າທາງເຂົ້າໄປໃນເຮືອນຂອງທ່ານບໍ່ໃຫ້ຜ່ານທີ່ຢູ່ຫລືຫ້ອງຫລືທີ່ຢູ່ອາໄສຂອງບຸກຄົນອື່ນ.*

**H1.** **ແຕ່ລະເດືອນແມ່ນໃຜແດ່ເປັນຜູ້ຈ່າຍຄ່າເຊົ່າບ້ານ, ຄ່າພາສີ, ຄ່າໄຟຟ້າ ແລະຄ່າສິ່ງອື່ນ ໆ?**

*ຖ້າມີຫລາຍກ່ວາບຸກຄົນນຶ່ງເປັນຜູ້ຈ່າຍຄ່າເຊົ່າບ້ານ, ຄ່າພາສີ, ຄ່າໄຟຟ້າ ແລະຄ່າສິ່ງອື່ນ ໆ, ຈົ່ງໃຫ້ທ່ານໃຫ້ທ່ານຂີດໝາຍຄຳຕອບດັ່ງຕໍ່ລົງລຸ່ມນີ້ຫລາຍເທົ່າໃດແຫ່ງເປັນການດີ.*

- ❍ ແມ່ນບຸກຄົນຜູ້ທີ່ 1 ເປັນຜູ້ຈ່າຍ
- ❍ ແມ່ນບຸກຄົນຜູ້ທີ່ 2 ເປັນຜູ້ຈ່າຍ
- ❍ ແມ່ນບຸກຄົນຜູ້ທີ່ 3 ເປັນຜູ້ຈ່າຍ
- ❍ ແມ່ນບຸກຄົນຜູ້ທີ່ 4 ເປັນຜູ້ຈ່າຍ
- ❍ ແມ່ນບຸກຄົນຜູ້ທີ່ 5 ເປັນຜູ້ຈ່າຍ
- ❍ ແມ່ນບຸກຄົນຜູ້ທີ່ມີຊື່ຢູ່ໃນຄຳຖາມທີ່ສອງຂອງສະຕິຕິສຳມະໂນຄົວການາດາ ເປັນຜູ້ຈ່າຍ
- ❍ ແມ່ນບຸກຄົນຜູ້ທີ່ບໍ່ໄດ້ອາໄສຢູ່ໃນເຮືອນຫລືສະຖານທີ່ແຫ່ງນີ້ເປັນຜູ້ຈ່າຍ

---

**H2.** **ເຮືອນຫລືບ້ານຂອງທ່ານຫລັງນີ້:**

*(ຈົ່ງໃຫຄຳຕອບພຽງອັນດຽວເທົ່ານັ້ນ)*

- ❍ ແມ່ນທ່ານເອງຫລືວ່າບຸກຄົນໃດຄົນນຶ່ງໃນຄອບຄົວຂອງທ່ານເປັນເຈົ້າຂອງບ້ານແຫ່ງນີ້ບໍ່ (ເຖີງແມ່ນວ່າຍັງມີການຈ່າຍຜ່ອນຄ່າບ້ານຫລືເຮືອນຂອງທ່ານແຕ່ລະເດືອນຕໍ່ໄປກໍ່ຕາມ)?
- ❍ ເປັນເຮືອນຫລືບ້ານແບບໃຫ້ຄົນເຊົ່າບໍ່ (ເຖີງແມ່ນວ່າຈະບໍ່ມີການຈ່າຍຄ່າເຊົ່າແບບເປັນເງິນສົດຕົວຈິງກໍ່ຕາມ)?

---

**H3.** (a) **ເຮືອນຫລືບ້ານທີ່ທ່ານອາໄສຢູ່ໃນປັດຈຸບັນນີ້ມີຈັກຫ້ອງຮ່ວມກັກນທັງຫມົດ?**

*ຄວາມຫມາຍວ່າ "ຫ້ອງ" ຕ້ອງຮ່ວມກັນກັບ ຫ້ອງແຕ່ງກິນຫລືເຮືອນຄົວ, ຫ້ອງນອນ, ຫ້ອງຮັບແຂກ, ຫ້ອງຢູ່ໃນຊັ້ນລ້າງຫລືຫ້ອງໃຕ້ດິນ ແລະຫ້ອງອື່ນ ໆ.*

*ຈົ່ງຢ່າຮ່ວມຫ້ອງນ້ຳ, ທາງຍ່າງຫລືຫ້ອງສຳຫລັບໃຊ້ເປັນຫ້ອງທຳງານທຸລະກິດການຄ້າຂາຍຢ່າງອື່ນ*

← ມີຈຳນວນຫ້ອງທັງຫມົດ

__________

(b) **ໃນຈຳນວນຫ້ອງທັງຫມົດໃນເຮືອນ ມີຫ້ອງນອນຈັກຫ້ອງ?**

← ມີຈຳນວນຫ້ອງນອນທັງຫມົດ

__________

---

**H4.** ເຮືອນຫລືບ້ານຂອງທ່ານຫລັງນີ້ໄດ້ກໍ່ສ້າງຂຶ້ນໃນປີໃດ?

*ຈົ່ງຢ່ານັບເອົາປີທີ່ທ່ານໄດ້ສ້ອມແປງເຮືອນຫລືບ້ານດັ່ງກ່າວ. ຖ້າທ່ານບໍ່ສາມາດຈຳປີທີ່ເຮືອນຫລືບ້ານຂອງທ່ານໄດ້ກໍ່ ສ້າງຕັ້ງຂຶ້ນ ຈົ່ງໃຫ້ທ່ານຄິດເດົາເອົາປີໃດທ່ານຄິດວ່າມັນແມ່ນປີທີ່ໃກ້ຄຽງທີ່ສຸດ.*

- ❍ ປີ ໑໙໒໐ ຫລືກ່ອນປີນີ້
- ❍ ປີ ໑໙໒໑ - ໑໙໔໕
- ❍ ປີ ໑໙໔໖ - ໑໙໖໐
- ❍ ປີ ໑໙໖໑ - ໑໙໗໐
- ❍ ປີ ໑໙໗໑ - ໑໙໘໐
- ❍ ປີ ໑໙໘໑ - ໑໙໘໕
- ❍ ປີ ໑໙໘໖ - ໑໙໙໐
- ❍ ປີ ໑໙໙໑ - ໑໙໙໕
- ❍ ປີ ໑໙໙໖ - ໒໐໐໐
- ❍ ປີ ໒໐໐໑ - ໒໐໐໖

---

**H5.** ເຮືອນຫລືບ້ານຂອງທ່ານອາໄສຢູ່ໃນປັດຈຸບັນນີ້ ຕ້ອງການສ້ອມແປງບໍ່?

*ຈົ່ງຢ່າຮ່ວມສິ່ງທີ່ຕ້ອງການສ້ອມແປງໃຫມ່ ຫລືຕ້ອງການປັບປຸງເສີມສ້າງຫ້ອງຫລືສ່ວນໃດສ່ວນນຶ່ງຂອງຮູບຮ່າງເຮືອນ ຂອງທ່ານດັ່ງກ່າວ.*

- ❍ ບໍ່, ພຽງແຕ່ທາງເຂົ້າໄປໃນເຮືອນຕ້ອງການສ້ອມແປງ (ຄື: ທາສີໃຫມ່, ລ້າງແລະຮັກສາຄວາມສະອາດຂອງລະບົບ ເຄື່ອງ ຈັກຜະລິດອາຍຮ້ອນຢູ່ພາຍໃນເຮືອນ, ແລະສິ່ງທີ່ກ່ຽວຂ້ອງຢ່າງອື່ນ ໆ ເທົ່ານັ້ນ).
- ❍ ແມ່ນ, ພຽງແຕ່ຕ້ອງການສ້ອມແປງເລັກນ້ອຍ ເຊັ່ນ: ແປງພື້ນເຮືອນ, ແປງດິນຈີ່ທີ່ແຕກເພພັງເລັກນ້ອຍ, ແປງຂັ້ນໄດ, ແປງຝາອອ້ມແອ້ມເຮືອນແລະສິ່ງອື່ນ ໆ ພຽງເລັກນ້ອຍ)
- ❍ ແມ່ນ, ຕ້ອງການສ້ອມແປງຢ່າງໃຫຍ່, ເຊັ່ນ: ແປງຫ້ອງນ້ຳແລະລະບົບທໍ່ນ້ຳ, ແປງລະບົບການຕິດຕັ້ງໄຟຟ້າແບບ ໃຊ້ສາຍໄຟຟ້າໃຫມ່, ອອກແບບຮູບຮ່າງເຮືອນແລະເສີມສ້າງແບບໃຫມ່, ສ້ອມແປບເພດ້ານແລະລະບົບໄຟ ແລະ ສິ່ງອື່ນ ໆ ພາຍໃນເຮືອນຫລາຍຢ່າງ)

---

ທ່ານຈົ່ງຕອບຄໍາຖາມຈາກຂໍ້ H6 ຫາ ຂໍ້ H8 ທີ່ກ່ຽວຂ້ອງກັບເຮືອນຫລືບ້ານທີ່ທ່ານອາໄສຢູ່ໃນປັດຈຸບັນເທົ່ານັ້ນ, ເຖິງແມ່ນວ່າທ່ານໄດ້ເປັນເຈົ້າຂອງ ຫລືໄດ້ເຊົ່າເຮືອນຫລືບ້ານຫລາຍຫລັງກໍ່ຕາມ. ຖ້າທ່ານບໍ່ສາມາດຈື່ຈໍານວນເງິນຄ່າຈ່າຍຜ່ອນເຮືອນຫລືຄ່າເຊົ່າເຮືອນຂອງທ່ານແຕ່ລະເດືອນ ຫລືແຕ່ລະປີກໍ່ຕາມ ຈົ່ງໃຫ້ທ່ານຄິດເດົາເອົາຈໍານວນທີ່ທ່ານຄິດວ່າໃກ້ຄຽງແລະເຫມາະສົມທີ່ສຸດສໍາຫລັບຕອບຄໍາຖາມແຕ່ລະຄໍາຕໍ່ໄປນີ້.

**ຫມາຍເຫດ:** *ຖ້າທ່ານຫລືບຸກຄົນໃດຄົນນຶ່ງໃນຄອບຄົວຂອງທ່ານເປັນຊາວໄຮ່ຊາວນາໄດ້ທໍາທຸລະກິດການປູກຝັງ ຈົ່ງໃຫ້ທ່ານຂີດຕອບຄໍາຖາມວົງມົນນີ້ ➜ ❍ ແລະໃຫ້ທ່ານຂ້າມໄປຕອບຄໍາຖາມຢູ່ໃນ **ຂັ້ນຈີ (G)** ໃນຫນ້າຕໍ່ໄປ.*

**H6.** ລາຍຈ່າຍຄ່າເຮືອນ ຫລືຄ່າເຊົ່າທີ່ຢູ່ຂອງທ່ານແຕ່ລະປີໃນລະຍະເວລາ ໑໘ ເດືອນຜ່ານມາ ຕົກເປັນຈໍານວນ ລາຍຈ່າຍທັງຫມົດເທົ່າໃດ?

(a) ຄ່າໄຟຟ້າ?

❍ ບໍ່, ບໍ່ມີຈ່າຍ
❍ ຮ່ວມຢູ່ໃນຄ່າເຊົ່າຫລືຄ່າລາຍຈ່າຍຢ່າງອື່ນ ໆ

ຫລື $ ______ ________ .00 ຕໍ່ປີ

(b) ຄ່າ ນໍ້າມັນເຊື້ອເພີງ, ຄ່ານໍາມັນໄຕ້ໄຟແລະສໍາຫລັບແຕ່ງກິນ, ຄ່າຖ່ານຫີນ, ຄ່າໄມ້ດັງໄຟຫລືຟືນ ຫລືຄ່າຈ່າຍຊະນິດນໍ້າມັນເຊື້ອເພີງອື່ນ?

❍ ບໍ່, ບໍ່ມີຈ່າຍ
❍ ຮ່ວມຢູ່ໃນຄ່າເຊົ່າຫລືຄ່າລາຍຈ່າຍຢ່າງອື່ນ ໆ

ຫລື $ ______ ________ .00 ຕໍ່ປີ

(c) ລາຍຈ່າຍຄ່ານໍ້າ ແລະຄ່າບໍລິການຢ່າງອື່ນ ໆ ຂອງລັດຖະບານທ້ອງຖິ່ນ?

❍ ບໍ່, ບໍ່ມີຈ່າຍ
❍ ຮ່ວມຢູ່ໃນຄ່າເຊົ່າຫລືຄ່າລາຍຈ່າຍຢ່າງອື່ນ ໆ

ຫລື $ ______ ________ .00 ຕໍ່ປີ

---

**H7.** ຄໍາຖາມຂໍ້ນີ້ສໍາຫລັບບຸກຄົນຜູ້ທີ່ໄດ້ເຊົ່າເຮືອນຫລືບ້ານຢູ່ເທົ່ານັ້ນ.

ຄ່າເຊົ່າເຮືອນຫລືບ້ານຫລັງນີ້ຕົກເປັນເງິນຈໍານວນເດືອນນຶ່ງຫລາຍເທົ່າໃດ?

❍ ເຊົ່າເຮືອນຫລືບ້ານຫລັງນີ້ເປັນແບບບໍ່ໄດ້ຈ່າຍຄ່າເຊົ່າປັນຈໍານວນເງິນສົດແທ້ຈິງ.

ຫລື $ ______ ________ .00 ຕໍ່ເດືອນ

---

**H8.** ຄຳຖາມນີ້ສະເພາະບຸກຄົນຜູ້ທີ່ເປັນເຈົ້າຂອງເຮືອນຫລືບ້ານເທົ່ານັ້ນ, ຈົ່ງຕອບຄຳຖາມຕອນ (a) ຫາ (f) ດັ່ງຕໍ່ລົງລຸ່ມນີ້:

(a) ຄ່າຈ່າຍຜ່ອນຫລືຄ່າຈ່າຍໃຫ້ເຈົ້າໜີ້ສຳຫລັບເຮືອນຂອງທ່ານຫລັງນີ້ແຕ່ລະເດືອນຫລາຍເທົ່າໃດ?

- ❍ ບໍ່ມີຈ່າຍ ➔ ຖ້າຕອບ "ບໍ່" ໃຫ້ຂ້າມໄປຕອບຄຳຖາມ (c)

ຫລື $ ________ __________ .00 ຕໍ່ເດືອນ

(b) ຈຳນວນຄ່າພາສີຊັບສິນຂອງທ່ານໄດ້ຮ່ວມຢູ່ໃນຄຳຕອບຂອງຕອນ (a) ບໍ່?

- ❍ ແມ່ນ ➔ ຖ້າຕອບ "ແມ່ນ" ໃຫ້ຂ້າມໄປຕອບຄຳຖາມ (d)
- ❍ ບໍ່

(c) ຄ່າຈ່າຍພາສີຊັບສິນເຮືອນຫລືບ້ານຂອງທ່ານຫລັງນີ້ປີຫລາຍເທົ່າໃດ?

- ❍ ບໍ່ມີພາສີ

ຫລື $ ________ __________ .00 ຕໍ່ປີ

(d) ຖ້າທ່ານຕ້ອງການຂາຍເຮືອນຂອງທ່ານຫລັງນີ້ ທ່ານຈະສາມາດຂາຍໄດ້ລາຄາເທົ່າໃດ?

**$** ______ __________ __________ .00

(e) ເຮືອນຂອງທ່ານຫລັງນີ້ເປັນເຮືອນແບບລົງທະບຽນ "ໂຄນໂດມີນຽມ" ຫລືແບບເຮືອນຫ້ອງແຖວບໍ່?

- ❍ ແມ່ນ ➔ ໃຫ້ທ່ານຕອບຄຳຖາມຕອນ **(f)** ຕໍ່ໄປ.
- ❍ ບໍ່ແມ່ນ ➔ ໃຫ້ທ່ານຂ້າມໄປຕອບຄຳຖາມຢູ່ຂັ້ນທີ່ເຈັດ **(G)** ໃນໜ້າຕໍ່ໄປ.

(f) ຄ່າທຳນຽມລົງທະບຽນເຮືອນ ໂຄນໂດມີນຽມ ຂອງທ່ານເດືອນນຶ່ງຫລາຍເທົ່າໃດ?

- ❍ ບໍ່ມີຄ່າທຳນຽມ

ຫລື $ ________ __________ .00 ຕໍ່ເດືອນ

---

## ຂັ້ນທີ່ເຈັດ **(G)**

ການຕອບຄຳຖາມສະຕິຕິສຳມະໂນຄົວຂອງທ່ານໄດ້ຈົບລົງໃນຂັ້ນນີ້.

---

# ພາກ ສອງ

ເປັນຫຍັງແລະມີເຫດຜົນຫຍັງແດ່ຈຶ່ງການທ່ານໃນການສຳຫລວດບັນທຶກສຳມະໂນຄົວໃນຄັ້ງນີ້?

## ເປັນຫຍັງແລະມີເຫດຜົນຫຍັງແດ່ຈຶ່ງຖາມທ່ານໃນການສຳຫລວດບັນທຶກສຳມະໂນຄົວໃນຄັ້ງນີ້?

### ຂັ້ນທີ່ນຶ່ງ (A):

ຫ້ອງການສະຖິຕິສຳມະໂນຄົວການາດາຕ້ອງການເລກໂທລະສັບຂອງທ່ານເພື່ອຈະໄດ້ຕິດຕໍ່ກັບທ່ານໂດຍຕົງ ຖ້າມີບັນຫາເກີດຂຶ້ນບາງຢ່າງ ເຊັ່ນຕົວຢ່າງ: ທ່ານລືມຕອບຄຳຖາມບາງຢ່າງ.

ທາງສູນກາງສະຖິຕິບັນທຶກສຳມະໂນຄົວການາດາຕ້ອງການທີ່ຢູ່ຂອງທ່ານເພື່ອເປັນການ ແນະນອນວ່າທີ່ຢູ່ຂອງທ່ານໄດ້ຖືກບັນທຶກເຂົ້າ ໃນບັນຊີຂອງສະຖິຕິສຳມະໂນຄົວການາດາແທ້ຈິງຫລືບໍ່? ສະນັ້ນ ຖ້າທີ່ຢູ່ຂອງທ່ານ ຍັງບໍ່ທັນໄດ້ຖືກບັນທຶກຫລືພິມລົງ ໃນໃບໜ້າປົກຂອງເອກະສານສະບັບນີ້ ຈົ່ງໃຫ້ທ່ານຂຽນທີ່ຢູ່ຂອງທ່ານລົງໃນເອກະສານນີ້ເປັນລາຍລະອຽດ, ຫລືໃຫ້ທ່ານຂຽນທີ່ຢູ່ຂອງ ທ່ານທີ່ແຕກຕ່າງຈາກທີ່ຢູ່ຂອງທ່ານໃນວັນທີ ໑໖ ເດືອນ ຫ້າ ປີ ໒໐໐໖.

ຖ້າວ່າທີ່ຢູ່ຂອງທ່ານໄດ້ຖືກພິມຫລືບັນທຶກຜິດຢູ່ໃນເອກະສານສຳມະໂນຄົວສະບັບນີ້, ເຊັ່ນຕົວຢ່າງ: ໄດ້ພິມນ້ຳເບີ້ເຮືອນ ຊື່ຖະໜົນ ຫລືທີ່ຢູ່ບໍ່ຖືກ ຕ້ອງ, ທ່ານບໍ່ຈຳເປັນດັດແປງທີ່ຢູ່ຂອງທ່ານຢູ່ໃນຊ່ອງຫວ່າງຂອງຄຳຕອບແຕ່ຢ່າງໃດ.

ເລກໂທລະສັບແລະທີ່ຢູ່ຂອງທ່ານອາດຈະຖືກໃຊ້ໃນ ເວລາສະຖິຕິສຳມະໂນຄົວການາດາດຳເນີນການສຳລວດແລະຄົ້ນຄ້ວາສຳມະໂນຄົວໃນອະນາຄົດ.

### ຂັ້ນທີ່ສອງ ແລະ ຂັ້ນທີ່ສາມ (ຂັ້ນ B ແລະ ຂັ້ນ C)

ໃນຂັ້ນນີ້ເປັນຂັ້ນທີ່ຊີ້ບອກໃຫ້ທ່ານຮູ້ວ່າ ແມ່ນບຸກຄົນໃດແດ່ຄວນຮ່ວມແລະບໍ່ຄວນຮ່ວມຈົດລາຍຊື່ຂອງຕົນເຂົ້າໃນບັນຊີລາຍຊື່ ສະມາຊິກ ຄອບຄົວຂອງທ່ານກ່ຽວກັບການຕອບຄຳຖາມສຳມະໂນຄົວຂອງທ່ານໃນຄັ້ງນີ້?

### ຂັ້ນທີ່ສີ່ (D):

ຄຳຖາມໃນຂັ້ນນີ້ ເປັນຄຳຖາມທີ່ກ່ຽວຂ້ອງກັບການທຳແລະດຳເນີນທຸລະກິດດ້ານການກະເສດ ຫລືການປູກຝັງ ຍ້ອນວ່າທາງ ສູນກາງສະຖິຕິ ການາດາມີຈຸດປະສົງອັນສຳຄັນຫລາຍທີ່ສຸດໃນການສຳຫລວດເກັບແລະບັນທຶກຂໍ້ມູນຂອງການຜະລິດຜົນ ດ້ານການກະເສດແຕ່ລະປີ.

### ຂັ້ນທີ່ຫ້າ (E):

ຈົ່ງໃຊ້ພະຍັນສະນະໂຕໃຫຍ່ໃນການກ່າຍເອົາລາຍຊື່ສະມາຊິກຄອບຄົວທີ່ທ່ານໄດ້ບັນທຶກລົງໃນຄຳຕອບຂອງທ່ານໃນຂໍ້ທີ່ນຶ່ງຢູ່ໃ**ນຂັ້ນທີ່ສອງ** ຫລືໃນ **ຂັ້ນທີ່ສອງ (B)** ໃນຊ່ອງວ່າງທີ່ມີໄວ້ເພື່ອໃຫ້ທ່ານຈົດລາຍຊື່ຂອງສະມາຊິກຄອບຄົວຂອງທ່ານເປັນຕາມລຳດັບແບບດຽວກັນ. ສິ່ງສຳຄັນກໍ່ຄື ລາຍຊື່ຂອງພວກສະມາຊິກຄອບຄົວຂອງທ່ານຕ້ອງຕົງກັນກັບລາຍຊື່ຂອງສະມາຊິກຄອບຄົວຜູ້ທີ່ທ່ານໄດຈື່ຈຳແລະຈົດໄວ້ໃນໜ້າທີ່ສີ່ດັ່ງກ່າວ. ຄຳຖາມຢູ່ໃນໜັງສືເຫລັ້ມນີ້ບັນຈຸຄຳຕອບໄດ້ຈຳນວນຫ້າຄົນເທົ່ານັ້ນ. ຖ້າວ່າທ່ານມີສະມາຊິກຄອບຄົວຫລາຍກ່ວາຫ້າຄົນ ທ່ານຈະຕ້ອງການ ເອກະສານຄຳຖາມອີກສະບັບນຶ່ງຈາກສະຖິຕິສຳມະໂນຄົວການາດາ, ສະນັ້ນ ຈົ່ງໃຫ້ທ່ານຕິດຕໍ່ກັບຫ້ອງການສະຖິຕິສຳມະໂນຄົວການາດາ ທາງໂທລະສັບໂດຍບໍ່ມີລາຍຈ່າຍຄື: **1 877 594-2006.**

# ຄຳຖາມ

## ຂໍ້ມູນຂັ້ນຕົ້ນກ່ຽວກັບພົນລະເມືອງ

**ຄຳຖາມຂໍ້ ໑:** ແມ່ນຄຳຖາມກ່ຽວກັບຊື່ຂອງສະມາຊິກຄອບຄົວແຕ່ລະຄົນເພື່ອບໍ່ໃຫ້ບຸກຄົນໃດໃນຄອບຄົວຂອງທ່ານຂາດຊື່ຢູ່ໃນບັນຊີລາຍຊື່ ຫລື ວ່າບໍ່ໃຫ້ສະມາສິກຄົນໃດຄົນນຶ່ງໃນຄອບຄົວຂອງທ່ານກືກຈົດຊື່ລົງໃນບັນຊີລາຍຊື່ຫລາຍກ່ວາຄັ້ງນຶ່ງ.

**ຄຳຖາມຂໍ້ ໒ ຫາ ຄຳຖາມຂໍ້ ໖:** ແມ່ນຄຳຖາມກ່ຽວກັບບຸກຄົນຜູ້ທີ່ອາໄສຢູ່ໃນຄອບຄອບຫລືຢູ່ໃນບ້ານດຽວກັນ. ຈາກຄຳຖາມດັ່ງກ່າວມານີ້ຈະຊີ້ບອກໃຫ້ປະຊາຊົນຮູ້ແລະເຂົ້າໃຈດີໃນການຈັດຕຽມນຳພາບັນດາປະຊາຊົນຢູ່ໃນປະເທດການາດາໃນລະບົບການຈັດຕັ້ງແບບໃດ, ເຊັ່ນຕົວຢ່າງ: ຂະນາດນ້ອຍ ຫລືໃຫຍ່ຂອງແຕ່ລະຄອບຄົວ, ຈຳນວນເດັກນ້ອຍຢູ່ຮ່ວມກັບພໍ່ຫລືແມ່ດຽວ ຫລືວ່າເດັກນ້ອຍຢູ່ຮ່ວມກັບພໍ່ແມ່ຫລາຍຄົນ, ແລະຈຳນວນບຸກຄົນຜູ້ທີ່ດຳເນີນຊີວິດຄອບຄົວຢູ່ກິນແບບຄົນດຽວ. ຂໍ້ມູນດັ່ງກ່າວນີ້ຈະກືກນຳໄປໃຊ້ໃນການວາງແຜນພັດທະນາດ້ານສັງຄົມ, ເຊັ່ນຕົວຢ່າງ: ເງິນເບັ້ຽລ້ຽງຜູ້ເກົ້າ ແລະເງິນພາສີເບັ້ຽລ້ຽງເດັກນ້ອຍ. ນອກຈາກນັ້ນ ຂໍ້ມູນດັ່ງກ່າວຈະກືກໃຊ້ໃນເຂດເມືອງນ້ອຍ, ໃນເຂດທ້ອງກິ່ນແລະໃນເມືອງໃຫຍ່ເພື່ອວາງແຜນການບໍລິຫານໃຫ້ແກ່ປະຊາຊົນ ເຊັ່ນຕົວຢ່າງ: ການປຸກສ້າງພັດທະນາສູນກາງລ້ຽງເດັກ, ປຸກສ້າງໂຮງຮຽນແລະສູນກາງເບິ່ງແຍງດູແລຄົນເກົ້າ.

## ວຽກງານຕ່າງ ໆ ໃນການດຳເນີນຊີວິດປະຈຳວັນ

**ຄຳຖາມຂໍ້໗ ແລະ ຂໍ້ ໘:** ແມ່ນຄຳຖາມຊຶ່ງຈະໃຫ້ຂໍ້ມູນກ່ຽວກັບປະຊາຊົນຢູ່ໃນປະເທດການາດາ ຜູ້ທີ່ມີບັນຫາໃນການດຳເນີນຊີວິດປະຈຳວັນຂອງເຂົາເຈົ້າ, ເຊັ່ນຕົວຢ່າງພວກເສັຽອົງຄະດ້ານສຸຂະພາບ ຫລືດ້ານມັນສະມອງແນວຄິດແລະຈິດໃຈເພື່ອສ້າງສາພັດທະນາຊີວິດປະຈຳວັນຂອງພວກເຂົາເຈົ້າແຕ່ລະວັນຕໍ່ໄປ. ຜົນງານ ຫລືຂໍ້ມູນຂອງການສຳຫລວດຈາກຄຳຖາມດັ່ງກ່າວມານີ້ ທາງສູນກາງຈັດຕັ້ງ ຂອງສະຕິກິສຳມະໂນຄົວການາດາຈະນຳໄປໃຊ້ໃນການໃຫ້ການຊ່ວຍເຫລືອສົ່ງເສີມແລະການບໍລິການແກ່ພວກທີ່ມີບັນຫາດ້ານສຸຂະພາບແລະພວກທີ່ເສັຽອົງຄະໃນການດຳເນີນຊີວິດການເປັນຢູ່ປະຈຳວັນຂອງພວກເຂົາເຈົ້າແຕ່ລະວັນ.

## ຂໍ້ມູນກ່ຽວກັບສັງຄົມແລະວັດທະນາທຳ

**ຄຳຖາມຂໍ້ ໙ ຫາ ຂໍ້ ໒໑:** ຄຳຖາມຂໍ້ດັ່ງກ່າວຈຳຊີ້ນຳໃຫ້ພວກເຮົາຮູ້ແລະເຂົ້າໃຈດີກ່ຽວກັບສະພາບການໃນດ້ານສັງຄົມແລະວັດທະນາທຳຂອງພົນລະເມືອງຢູ່ໃນປະເທດການາດາແບບລາຍລະອຽດ.

**ຄຳຖາມຂໍ້ ໙:** ຄຳຖາມຂໍ້ນີ້ຈະຊີ້ນຳໃຫ້ພວກເຮົາຮູ້ແລະເຂົ້າໃຈກ່ຽວກັບເຂດແຂວງ ແລະພົນລະເມືອງຜູ້ທີ່ໄດ້ເກີດແລະອາໄສຢູ່ໃນແຂວງ ຫລືດິ ແດນຕ່າງ ໆ ຫລືຢູ່ຕ່າງປະເທດ. ຂໍ້ມູນຈາກຄຳຖາມຂໍ້ນີ້ຈະສາມາດຊີ້ນຳໃຫ້ພວກເຮົາຮູ້ແລະເຂົ້າໃຈດີກ່ຽວກັບການເຄື່ອນໄຫວແລະການຍົກຍ້າຍທ້ອງທ່ຽວຂອງພົນລະເມືອງຢູ່ໃນປະເທດການາດ ຫລືລະຫວ່າງປະເທດການາດາແລະປະເທດອື່ນ ໆ. ນອກຈາກນັ້ນຍັງໄດ້ຊີ້ນຳແລະໃຫ້ຂໍ້ມູນແກ່ພວກເຮົາກ່ຽວກັບຄວາມແຕກຕ່າງດ້ານສັງຄົມວັດທະນະທຳຂອງແຕ່ລະຊົນຊາດຊົນເຜົ່າອາໄສຢູ່ໃນປະເທດການາດາ.

**ຄຳຖາມຂໍ້໑໐:** ຄຳຖາມຂໍ້ນີ້ຊີ້ນຳໃຫ້ພວກເຮົາຮູ້ແລະເຂົ້າໃຈກ່ຽວກັບສະພາບການເປັນຢູ່ແລະສິ່ງແວດລ້ອມຂອງພົນລະເມືອງຂອງປະເທດ ການາດາ. ຂໍ້ມູນທີ່ໄດ້ມາຈາກຄຳຖາມຂໍ້ນີ້ຈະຊ່ວຍໃຫ້ເຈົ້າໜ້າທີ່ຮັບຜິດຊອບດ້ານການວາງແຜນກ່ຽວກັບການເລືອກຕັ້ງນາຍົກລັດຖະມົນຕີ, ການເລືອກຕັ້ງຄະນະຜູ້ແທນປະຈຳສາພາຂອງລັດຖະບານແຂວງ ແລະລັດຖະບານກາງຢູ່ໃນປະເທດການາດາ ໂດຍຈັດແຈງລະບົບການແບ່ງແຍກພົນລະເມືອງເປັນແບບກຸ່ມຕາມລຳດັບຂອງອາຍຸຈາກອາຍຸອ່ອນເຖິງອາຍຸແກ່ ແລະທາງຄະນະກຳມະການເລືອກຕັ້ງຂອງເມືອງ, ແຂວງ ແລະລັດຖະບານກາງຈະສາມາດບອກໄດ້ວ່າຈະມີຈຳນວນພົນລະເມືອງຫລາຍຫລືນ້ອຍເທົ່າໃດສາມາດລົງສຽງປ່ອນບັດໄດ້ ຫລືບໍ່? ຂໍ້ມູນຂອງຄຳຖາມຂໍ້ນີ້ຈະສາມາດບອກຂໍ້ມູນໃນການຈັດຕຽມແຜ່ນການແບ່ງຊົນຊັ້ນຂອງພົນລະເມືອງຂອງປະເທດການາດາໄດ້ລາຍລະອຽດ.

**ຄຳຖາມຂໍ້ ໑໑ ແລະ ຂໍ້ ໑໒:** ຄຳຖາມສອງຂໍ້ນີ້ສາມາດບອກໃຫ້ພວກເຮົາຮູ້ຈຳນວນຄົນຕ່າງດ້າວຜູ້ທີ່ອາໄສຢູ່ໃນປະເທດການາດາແບບກາວອນແລະແບບຊົ່ວຄາວ, ແລະພ້ອມດ້ວຍປີຫລືເວລາໃດພວກຄົນຕ່າງດ້າວດັ່ງໄດ້ເຂົ້າມາອາໄສຢູ່ໃນປະເທດການາດາ. ນອກຈາກນັ້ນຄຳຖາມສອງຂໍ້ນີ້ຈະຊ່ວຍໃຫ້ພວກເຮົາຮູ້ແລະເຂົ້າໃຈກ່ຽວກັບສະພາບການຢູ່ກິນແລະການພັດທະນາດ້ານສັງຄົມເສດຖະກິດຂອງພວກຄົນຕ່າງດ້າວດັ່ງກ່າວພາຍໃນລະຍະເວລາແຕ່ລະປີຫລືໃນລະຍະເວລາທີ່ໄດ້ວາງໄວ້: ແລະຍັງໄດ້ຊ່ວຍພວກຄະນະກຳມະການຂອງລັດຖະບານຂັ້ນເມືອງ, ຂັ້ນແຂວງ ແລະຂັ້ນລັດຖະບານກາງຫລືລັດຖະບານແຫ່ງຊາດໃນການວາງແຜນການຄວບຄຸມພັດທະນາຄົນຕ່າງດ້າວຜູ້ທີ່ເຂົ້າມາອາໄສຢູ່ໃນ ປະເທດການາດາ ພ້ອມດ້ວຍການວາງແຜນການແລະ ອອກນະໂຍບາຍການປົກຄອງແລະການບໍລິຫານງານດ້ານ ການພັດທະນາດ້ານສັງຄົມແລະເສດຖະກິດຂອງປະເທດ, ເຊັ່ນຕົວຢ່າງ: ການວາງແຜນພັດທະນາດ້ານການສຶກສາ, ການອະນາໄມແລະດ້ານ ການບໍລິການອື່ນ ໆ.

**ຄຳຖາມຂໍ້ ໑໓ ຫາ ຂໍ້ ໑໖:** ຄຳຖາມສອງຂໍ້ນີ້ຈະຊ່ວຍໃຫ້ພວກເຮົາສາມາດຮູ້ແລະເຂົ້າໃຈກ່ຽວກັບການນຳເອົາກົດລະບຽບແລະແຜ່ນການ ປ້ອງ ກັນສິດເສຣີພາບ. ສິດທິມະນຸດແລະຄວາມຍຸຕິທຳຂອງແຕ່ລະບຸກຄົນຂອງ ຫລືຂອງປະຊາຊົນການາດາຊຶ່ງໄດ້ບົ່ງໄວ້ໃນຂໍ້ບັນຍັດກົດໝາຍເພື່ອປ້ອງກັນສິດເສຣີພາບແລະປະຊາທິປະໄຕຂອງປະຊາຊົນການາດາ.

**ຄຳຖາມຂໍ້ ໑໗:** ຄຳຖາມຂໍ້ນຊີ້ນຳແລະໃຫ້ຂໍ້ມູນແກ່ພວກເຮົາຮູ້ກ່ຽວກັບຄວາມແຕກຕ່າງດ້ານ ຊົນຊາດ, ວັດທະນາທຳ ແລະ ຮີດຄອງ ປະ ເພນີ, ຊີວິດການດຳເນີນງານດ້ານການຄອງຊີບແລະສິ່ງແວດລ້ອມອື່ນ ໆ ຂອງຄົນຕ່າງດ້າວຜູ້ທີ່ ອາໄສຢູ່ໃນປະເທດການາດາເປັນ ລາຍລະອຽດ. ຄຳຖາມຂໍ້ນີ້ຈະຊ່ວຍໃຫ້ພວກຄະນະບໍລິຫານງານຂອງການສຳຫລວດເກັບຂໍ້ມູນເພື່ອການເລືອກຕັ້ງຂອງຄະນະຜູ້ແທນແລະຜູ້ນຳ ຢູ່ໃນທຸກຂັ້ນຂອງລັດຖະບານ ເພື່ອຖືກຕ້ອງຕາມກົດໝາຍປ້ອງກັນວັດທະນາທຳແລະຮີດຄອງປະເພນີຕ່າງ ໆ ແລະກົດໝາຍຂໍ້ບັນຍັດປ້ອງກັນ ສິດທິມະນຸດແລະຄວາມຍຸຕິທຳຂອງປະຊາຊົນຂອງປະເທດການາດາ. ນອກຈາກນັ້ນ ພວກຄະນະຜູ້ນຳບໍລິຫານງານຂອງສະມາຄົມຂອງຊົນ ຊາດຕ່າງດ້າວຕ່າງ ໆ ພ້ອມດ້ວຍອົງການຈັດຕັ້ງແລະພວກຄະນະກຳມະການດ້ານການສຶກສາສຳຫລວດເກັບຂໍ້ມູນກ່ຽວກັບການວາງແຜນ ພັດທະນາໃນດ້ານການອະນາໄມຂອງຊາດ,ການປັບປຸງສົ່ງເສີມທຸລະກິດການຄ້າຂາຍ ແລະການຄົມມະນາຄົມ ແລະການພັດທະນາດ້ານ ການຕະລາດທົ່ວໄປກໍ່ຈະໄດ້ຮັບຜົນປະໂຍດຈາກຄຳຖາມຂໍ້ນີ້.

**ຄຳຖາມຂໍ້ ໑໘, ໔໐ ແລະ ໔໑:** ຄຳຖາມສາມຂໍ້ນີ້ຈະຊ່ວຍໃຫ້ພວກເຮົາຮູ້ແລະເຂົ້າໃຈກ່ຽວກັບປະຊາຊົນພື້ນເມືອງຂອງປະເທດການາດາ (ເຊັ່ນ: ພວກຄົນອິນເດັຽແດງປະຈຳທະວີບອະເມຣິກາເໜືອ, ກຸ່ມອິນດຽນອະເມຣິກາເໜືອ ເມຕິສ ແລະ ກຸ່ມອີນຸອິຕ (Inuit)) ຂໍ້ມູນຈາກຄຳຖາມສາມຂໍ້ດັ່ງກ່າວ ຈະມີຜົນປະໂຍດແກ່ພວກຄະນະບໍລິຫານງານແລະພວກຜູ້ນຳຂອງກຸ່ມເຜົ່າ ອິນດຽນ ເມຕິສ ແລະ ອີນຸອິຕໃນການວາງແຜນອອກຮ່າງກົດໝາຍໃໝ່ ແລະການພັດທະນາດ້ານແຮງງານຊະນິດຕ່າງ ໆ ເພື່ອໃຫ້ຖືກຕ້ອງຕາມກົດໝາຍຫລືຂໍ້ສັນຍາຂອງເຜົ່າອິນເດັຽແດງແລະແອສກີໂມພ້ອມດ້ວຍ ໃຫ້ຖືກຕ້ອງຕາມກົດໝາຍແຮງງານຂອງປະເທດການາດາ. ນອກຈາກນັ້ນຄຳຖາມຂໍ້ນີ້ຈະຊ່ວຍໃຫ້ພວກຄະນະສຶກສາສຳຫລວດເກັບຂໍ້ມູນ ແລະ ພວກຄະນະບໍລິຫານງານແລະພວກຜູ້ນຳຂອງສະມາຄົມແລະການປົກຄອງຂອງພວກເຜົ່າອິນເດັຽແດງແລະແອສກີໂມໃນການຈັດຕັ້ງແບ່ງ ແຍກກຸ່ມຊົນເຜົ່າຕ່າງ ໆ ແລະ ການວາງແຜນພັດທະນາດ້ານສັງຄົມແລະເສດຖະກິດທົ່ວໄປເພື່ອໃຫ້ຮັບຜົນດີ.

**ຄຳຖາມຂໍ້ ໑໙:** ຄຳຖາມຂໍ້ນີ້ຈະຊ່ວຍໃຫ້ພວກເຮົາຮູ້ແລະເຂົ້າໃຈກ່ຽວກັບປະຊາຊົນກຸ່ມນ້ອຍຢູ່ໃນປະເທດການາດາ. ຂໍ້ມູນຈາກຄຳຖາມຂໍ້ນີ້ ຈະຊ່ວຍໃຫ້ພວກຄະນະຜູ້ນຳແລະພວກບໍລິຫານງານທຸກພະແນກແລະອົງການຈັດສາມາດວາງແຜນດ້ານການພັດທະນາສົ່ງເສີມຕ່າງ ໆ ໃຫ້ໄດຜົນ ດີແລະໃຫ້ຖືກຕ້ອງຕາມກົດໝາຍແລະນະໂຍບາຍແຮງງານການາດາ ເພື່ອໃຫ້ມີຄວາມຍຸຕິທຳແລະສະເມີພາບແກ່ປະຊາຊົນຂອງປະເທດການາດາ ທຸກຄົນ.

## ການເຄື່ອນຍ້າຍ

**ຄຳຖາມຂໍ້ ໔໒ ແລະ ໔໓:** ຄຳຖາມຂໍ້ນີ້ຈະບອກໃຫ້ພວກເຮົາຮູ້ແລະເຂົ້າໃຈກ່ຽວກັບການເຄື່ອນຍ້າຍຂອງພົນລະເມືອງ ເຊັ່ນ ການເຄື່ອນຍ້າຍ ຢູ່ພາຍໃນປະເທດຫລືເຂດແຂວງຕ່າງ ໆ ແລະການເຄື່ອນຍ້າຍອອກຈາກປະເທດແລະກັບຄືນເຂົ້າສູ່ປະເທດການາດາ. ຂໍ້ມູນຈາກຄຳຖາມຂໍ້ນີ້ ຈະຖືກໝູນໃຊ້ໃນການຄາດຄະເນຈຳນວນພົນລະເມືອງປະຈຳປີຂອງປະເທດ, ຂອງແຕ່ລະແຂວງແລະຂອງແຕ່ລະເມືອງຫລືເຂດທ້ອງຖິ່ນຕ່າງ ໆ ເພື່ອການວາງແຜນພັດທະນາດ້ານການປຸກສ້າງບ້ານຫລືຕຶກອາຄານ, ດ້ານການສຶກສາ, ດ້ານການຂົນສົ່ງ ແລະການໃຫ້ບໍລິການດ້ານສັງຄົມ ເພື່ອໃຫ້ຖືກຕ້ອງຕາມກົດໝາຍແລະນະໂຍບາຍຂອງການຈັດຕຽມວາງແຜນການປະຈຳແຕ່ລະປີໃຫ້ໄດ້ຮັບຜົນດີຂື້ນ.

## ບ່ອນເກີດຂອງພໍ່ແມ່

**ຄຳຖາມຂໍ້ ໔໔:** ຄຳຖາມຂໍ້ນີ້ຈະຊີ້ນຳໃຫ້ພວກເຮົາຮູ້ແລະເຂົ້າໃຈກ່ຽວກັບບ່ອນເກີດ ຫລືບ້ານເກີດເມືອງນອນຂອງພໍ່ແມ່ຂອງພວກປະຊາ ຊົນຜູ້ທີ່ໄດ້ເກີດຢູ່ໃນປະເທດການາດາ ແລະພວກພໍ່ແມ່ຂອງເຂົາເຈົ້າໄດ້ເກີດຢູ່ຕ່າງປະເທດ. ຂໍ້ມູນຂອງຄຳຖາມຂໍ້ນີ້ຈະໃຫ້ຜົນປະໂຍດໃນການ ສຳຫລວດດ້ານສະພາບການເປັນຢູ່ແລະການພັດທະນາຊີວິດທາງດ້ານສັງຄົມເສດຖະກິດຂອງພວກປະຊາຊົນການາດາຫລຸ່ນໃໝ່ຢູ່ໃນປະເທດ ການາດໃຫ້ໄດ້ຮັບຜົນດີຕໍ່ໄປ.

## ການສຶກສາ

**ຄຳຖາມຂໍ້ ໔໕ ຫາ ໕໔:** ຄຳຖາມຂໍ້ນີ້ຈະຊ່ວຍບອກໃຫ້ພວກເຮົາຮູ້ແລະເຂົ້າໃຈກ່ຽວກັບການສຶກສາແລະການວາງແຜນຝຶກຫັດວິຊາອາຊີບ ສະເພາະ ຂອງແຕ່ລະຄົນເພື່ອໃຫ້ພວກເຂົາເຈົ້າມີຄວາມຮູ້ຄວາມສາມາດດີໃນການທຳວຽກງານຕ່າງ ໆ. ພວກຄະນະຜູ້ນຳແລະບໍລິຫານງານຂອງ ລັດຖະບານແລະນາຍຈ້າງເອກກະຊົນສາມາດນຳເອົາຂໍ້ມູນຈາກຄຳຖາມນີ້ໄປໃຊ້ໃນການວາງແຜນຝຶກຫັດແລະສົ່ງເສີມຄົນງານສຳຫລັບດຳເນີນ ງານໃນໜ້າທີ່ວຽກງານຕ່າງ ໆ ທີ່ຕ້ອງການຢູ່ໃນຕະລາດແຮງງານປັດຈຸບັນແລະການປ່ຽນແປງແລະຄວາມຕ້ອງການຕໍ່ໄປໃນອະນາຄົດ.

**ຄຳຖາມຂໍ້ ໕໔:** ຄຳຖາມຂໍ້ນີ້ຈະຊີ້ນຳໃຫ້ພວກເຮົາຮູ້ແລະເຂົ້າໃຈກ່ຽວກັບຂໍ້ມູນທີ່ຕ້ອງການເພື່ອການວາງແຜນໃນໂຄງການສຶກສາໃນຂັ້ນອຸດົມ ແລະໃນຂັ້ນມະຫາວິທະຍາໄລ ແລະຫລັກສູດການສຶກສາຝຶກຫັດແກ່ພວກປະຊາຊົນຜູ້ທີ່ມີອາຍຸແກ່ ພ້ອມດ້ວຍການວາງແຜນທາງດ້ານການເງິນ ຫລືທຶນການສຶກສາແລະດ້ານງົບປະມານລາຍຈ່າຍໃນໂຄງການພັດທະນາດັ່ງກ່າວໃຫ້ຖືກຕ້ອງຕາມກົດໝາຍແລະແນວທາງນະໂຍບາຍຂອງການ ໃຫ້ເງິນທຶນແລ ະເງິນກູ້ຢືມເພື່ອການສຶກສາແກ່ນັກຮຽນນັກສຶກສາໃນຂັ້ນສູງໃຫ້ໄດ້ຜົນດີຕໍ່ໄປ.

## ວຽກງານປະຈຳບ້ານຕ່າງ ໆ

**ຄຳຖາມຂໍ້ ໔໗:** ຄຳຖາມຂໍ້ນີ້ຈະບອກໃຫ້ພວກເຮົາຮູ້ແລະເຂົ້າໃຈຂໍ້ມູນກ່ຽວກັບເວລາທີ່ປະຊາຊົນໄດ້ໃຊ້ໃນການທຳວຽກງານປະຈຳວັນ ແບບ ບໍ່ໄດ້ຮັບເງິນຄ່າຈ້າງ ຢູ່ໃນບ້ານຫລືຢູ່ໃນຄອບຄົວຂອງເຂົາເຈົ້າ. ຂໍ້ມູນທີ່ໄດ້ຈາກຄຳຖາມຂໍ້ນີ້ຈະຊ່ວຍໃຫ້ພວກເຮົາຮູ້ວ່າປະຊາຊົນຢູ່ໃນປະເທດ ການາດາ ໄດ້ແບ່ງເວລາແລະໜ້າທີ່ຂອງພວກເຂົາເຈົ້າເພື່ອທຳງານເອົາເປັນເງິນຄ່າຈ້າງຫລືເພື່ອລາຍໄດ້ແຕ່ລະວັນ ແລະທຳວຽກງານປະຈຳບ້ານຫລືຄອບຄົວຂອງພວກເຂົາເຈົ້າທີ່ບໍ່ມີລາຍໄດ້ແບບເງິນເດືອນມດ້ວຍວິທີທາງໃດ.

## ວຽກງານປະຈຳຕະລາດແຮງງານທົ່ວໄປ

**ຄຳຖາມຂໍ້ ໔໘ ຫາ ໕໐:** ຄຳຖາມຂໍ້ນີ້ຈະບອກໃຫ້ພວກເຮົາຮູ້ແລະເຂົ້າໃຈກ່ຽວກັບຂໍ້ມູນຂອງຊະນິດວຽກງານທີ່ໄດ້ຮັບເງິນຄ່າຈ້າງແບບເປັນເງິນເດືອນຫລືແບບວຽກງານສຳຫລັບທຸລະກິດສ່ວນຕົວ ຂອງພວກປະຊາຊົນການາດາຜູ້ທີ່ມີອາຍຸຈາກ໑໕ ປີຂຶ້ນໄປ. ທາງອົງການຈັດຕັ້ງຂອງລັດຖະບານແລະຂອງເອກກະຊົນຕ່າງ ໆ ກໍ່ຈະສາມາດໃຊ້ຂໍ້ມູນຈາກຄຳຖາມຂໍ້ນີ້ເພື່ອການວາງແຜນໃນດ້ານການສຶກສາ, ການຝຶກຫັດວິຊາອາຊີບຂະແນງຕ່າງ ໆ, ເພື່ອຊ່ວຍໃນການສົ່ງເສີມແລະຄວາມຕ້ອງການພາສາຕ່າງຊາດອື່ນ ໆ, ເພື່ອການຄາດຄະເນໃນການຈັດຕັ້ງພັດທະນາລ່ວງໜ້າກ່ຽວກັບໂອກາດຊອກວຽກງານໃຫ້ພວກປະຊາຊົນທີ່ວ່າງງານ, ການວາງແຜນພັດທະນາດ້ານການຂົນສົ່ງທຸກດ້ານ ແລະ ເພື່ອປັບປຸງພັດທະນາລະບົບການຄົມມະນາຄົມ ແລະຂະຫຍາຍກໍ່ສ້າງພັດທະນາໃຫ້ມີວຽກງານໃໝ່ຫລາຍຂຶ້ນຢູ່ໃນເຂດ ແຂວງ ແລະທ້ອງຖິ່ນທົ່ວໄປໃນປະເທດການາດາໃຫ້ໄດ້ຮັບຜົນຫລາຍຂຶ້ນ.

## ລາຍໄດ້ປະຈຳປີ ໒໐໐໕

**ຄຳຖາມ ຂໍ້໕໑ ຫາ ໕໔:** ຄຳຖາມຂໍ້ນີ້ຈະບອກໃຫ້ພວກເຮົາຮູ້ແລະເຂົ້າໃຈລາຍລະອຽດກ່ຽວກັບສະຖິຕິຂໍ້ມູນຂອງລາຍໄດ້, ສະພາບການດຳເນີນຊີວິດແລະການປ່ຽນແປງໃນຄອບຄົວ ແລະ ສັບສິນສິ່ງຂອງໃຊ້ໃນຄອບຄົວຂອງພົນລະເມືອງຂອງປະເທດປະເທດການາດາ.

ທາງລັດຖະບານແຕ່ລະຂັ້ນຈະໃຊ້ຂໍ້ມູນຈາກຄຳຖາມຂໍ້ດັ່ງກ່າວໃນການຈັດຕັ້ງແລະວາງແຜນການນະໂຍບາຍໃນການໃຫ້ເງິນຊ່ວຍເຫລືອເພີ້ມເຕີມຂອງແຕ່ລະລັດຖະບານແຂວງ ເຊັ່ນຕົວຢ່າງ: ເງິນເບັ້ຽລ້ຽງເດັກ, ເງິນເບັ້ຽໃຫ້ແກ່ພວກຄົນເຖົ້າ, ເງິນສົງເຄາະໃຫ້ແກ່ປະຊາຊົນແລະຄອບຄົວ ທີ່ທຸກຈົນບໍ່ມີລາຍໄດ້ພຽງພໍ່ ແລະພວກທີ່ເສັຽອົງຄະ ທຳງານບໍ່ໄດ້ໃຫ້ໄດ້ຜົນດີຂຶ້ນ. ນອກຈາກນີ້, ທາງລັດຖະບານຕ້ອງໃຊ້ຂໍ້ມູນຈາກຄຳຖາມ ນີ້ເພື່ອສຳຫລວດວິໄຈບັນຫາແລະຄວາມຕ້ອງການຄວາມຊ່ວຍເຫລືອຂອງແຕ່ລະຄອບຄົວແລະແຕ່ລະບຸກຄົນ ເພື່ອຄວາມແນະນອນແລະໃຫ້ມີຄວາມສະເມີພາບໃນການວາງແຜນພັດທະນາດ້ານການປຸກສ້າງສູນກາງໃຫ້ຄົນເຖົ້າອາໄສຢູ່ແລະຄວາມຕ້ອງການຂອງປະຊາຊົນການາດາ ດ້ານອື່ນ ໆ ໃຫ້ໄດ້ຜົນດີຫລາຍຂຶ້ນ.

ທາງບໍລິສັດຂອງລັດຖະບານແລະຂອງເອກກະຊົນຕ້ອງການໃຊ້ຂໍ້ມູນຈາກຄຳຖາມຈາກຂໍ້ ໕໑ ຫາ ໕໔ ນີ້ ໃນການວາງແຜນການພັດທະນາສົ່ງເສີມດ້ານຊອກຊື່ແລະຫາສະຖານທີ່ຢູ່ຂອງບໍລິສັດຂາຍຍ່ອຍຫລືຂາຍສົ່ງຕ່າງ ໆ ພ້ອມດ້ວຍຈັດແຈງກຸ່ມຂອງພວກຂາຍແລະພວກຊື້ຕະລອດດ້ວຍພວກບໍລິໂພກຫລືພວກຕ້ອງການໃຊ້ສິນຄ້າຊະນິດຕ່າງ ໆ ໃຫ້ຖືກຕ້ອງແລະເໝາະສົມເພື່ອການຂະຫຍາຍແລະພັດທະນາດ້ານການຜະລິດຜົນ, ການຕະລາດແລະການບໍລິການຂອງພວກເຂົາເຈົ້າໃຫ້ໄດ້ຮັບຜົນດີຂຶ້ນ.

ທາງອົງການຈັດຕັ້ງສະຫະພັນແຮງງານ ແລະບໍລິສັດ ທຸລະກິດຕ່າງ ໆ ກໍ່ມີຄວາມຕ້ອງໃຊ້ຂໍ້ມູນສະຖິຕິລາຍໄດ້ຂອງປະຊາຊົນ ຈາກຄຳຖາມດັ່ງກ່າວເພື່ອຈັດແຈງລຳດັບຂອງລາຍໄດ້ແຕ່ລະກຸ່ມຂອງພວກສະມາຊິກໃນແຕ່ລະຂັ້ນ ເພື່ອຊ່ວຍພວກເຂົາເຈົ້າໃນການເຈລະຈາເອົາເງິນເດືອນຫລືເງິນຄ່າແຮງງານກັບພວກນາຍຈ້າງຫລືບໍລິສັດ ໃຫ້ພວກສະມາຊິກຂອງສະມາຄົມແຮງງານຂອງພວກເຂົາ ໃຫ້ຖືກຕ້ອງ ມີຄວາມຍຸຕິທຳແລະສະເມີພາບດີຂຶ້ນ.

ນອກຈາກນັ້ນ ທາງອົງການປະຊາສົງເຄາະຕ້ອງການໃຊ້ຂໍ້ມູນສະຖິຕິລາຍໄດ້ຈາກຄຳຖາມດັ່ງກ່າວ ໃນການວິໄຈຄົ້ນຄ້ວາແລະສຳຫລວດລາຍໄດ້ລາຍຈ່າຍຂອງແຕ່ລະບຸກຄົນ ແລະແຕ່ລະຄອບຄົວກ່ອນຈະອະນຸມັດເງິນຊ່ວຍເຫລືອສິ່ງຂອງຕ່າງ ໆ ໃຫ້ແກ່ແຕ່ລະບຸກຄົນ ແລະແຕ່ລະຄອບຄົວໃຫ້ຖືກຕ້ອງ ສະເມີພາບ ແລະເໝາະສົມແບບຮຽບຮ້ອຍແລະໃຫ້ໄດ້ຜົນດີຂຶ້ນ.

ບຸກຄົນທົ່ວໄປກໍ່ສາມາດໃຊ້ຂໍ້ມູນສະຖິຕິລາຍໄດ້ປະຈຳປີຂອງຕົນເອງຈາກຄຳຖາມດັ່ງກ່າວເພື່ອການວິໄຈປຽບທຽບລາຍລາຍໄດ້ຈາກວຽກງານ ຂອງພວກເຂົາເຈົ້າ ເພື່ອຢາກໃຫ້ພວກເຂົາເຈົ້າຮູ້ແລະເຂົ້າໃຈວ່າ ລາຍໄດ້ທີ່ພວກເຂົາເຈົ້າໄດ້ມານັ້ນມັນເໝາະສົມກັບຊະນິດວຽກງານແລະໜ້າທີ່ຂອງພວກເຂົາໃນປັດຈຸບັນແລະໃນອະນາຄົດຕໍ່ໄປ.

**ຈົ່ງໃຫ້ພວກທ່ານເຂົ້າໃຈແລະມີຄວາມເຊື່ອໝັ້ນ, ທາງສະຖິຕິບັນທຶກສຳມະໂນຄົວການາດາບໍ່ເຄີຍແລະຈະບໍ່ຂາຍຫລືຈະບໍ່ເອົາຂໍ້ມູນຂອງທ່ານໃຫ້ບຸກຄົນຫລືອົງການຈັດຕັ້ງໃດ ໆ ທັງໝົດ, ຮ່ວມກັບອົງການຈັດຕັ້ງຕ່າງ ໆ ຂອງລັດຖະບານການາດາ, ເຊັ່ນກົມພາສີລາຍໄດ້ການາດາ ແລະຫ້ອງການຂອງລັດຖະບານ ຫລືຂອງເອກກະຊົນອື່ນ ໆ. ຄຳຕອບຂອງທ່ານທັງໝົດຈະເກັບມ້ຽນເປັນຄວາມຫລັບສ່ວນຕົວອັນສຳຄັນ ຊຶ່ງປ້ອງກັນດ້ວຍກົດໝາຍຂອງປະເທດການາດາ.**

| ການນຳເອົາຂໍ້ມູນສະຖິຕິສ່ວນຕົວຫລັງຈາກ ໙໒ ປີຈາກປີ ໒໐໐໖ |
| --- |

**ຄຳຖາມຂໍ້ ໕໓:** ຄຳຖາມຂໍ້ນີ້ຈະບອກໃຫ້ພວກເຮົາຮູ້ແລະເຂົ້າໃຈກ່ຽວກັບຢ່າງແນະນອນກ່ຽວກັບການໃຊ້ຂໍ້ມູນສະຖິຕິຂອງແຕ່ລະບຸກຄົນ ຄື ແຕ່ລະບຸກຄົນມີສິດແລະມີໂອກາດເທົ່າທຽມກັນໃນການນຳເອົາຂໍ້ມູນສ່ວນຕົວຂອງຕົນໄປໃຊ້ເພື່ອວຽກງານສ່ວນຕົວ. ສະນັ້ນບຸກຄົນໃດ ຫລື ຖ້າທ່ານຕອບຄຳຖາມຂໍ້ນີ້ "**ແມ່ນ ຕົກລົງ**" **ຂອງການບັນທຶກສຳມາໂນຄົວໃນປີ ໒໐໐໖** ທາງສະຖິຕິສຳມະໂນຄົວການາດາຈຶ່ງຈະມີສິດ ປ່ອຍຂໍ້ມູນສ່ວນຕົວຂອງທ່ານໃຫ້ບຸກຄົນອື່ນຫລື ອົງການຈັດຕັ້ງໃດຈັດຕັ້ງນຶ່ງ ຫລືໃຫ້ໂຮງພິມຈັດ ພິມຂໍ້ມູນສ່ວນຕົວຂອງທ່ານອອກແຈກຢ່າຍໄດ້ຫລັງຈາກລະຍະເວລາ ໙໒ ປີຈາກປີ ໒໐໐໖.

ສະນັ້ນກ່ອນທ່ານຈະຕອບຄຳຖາມຂໍ້ນີ້, ຈຶ່ງໃຫ້ທ່ານປຶກສາສອບຖາມສະມາຊິກຄອບຄົວຂອງທ່ານແຕ່ລະຄົນເພື່ອເອົາຄຳຄິດເຫັນແລະການຕົກລົງໃຈຂອງແຕ່ລະສະມາສິກບຸກຄົນໃຈຄອບຄົວຂອງທ່ານລາຍລະອຽດສາກ່ອນ. ຖ້າວ່າມີສະມາສິກຄົນໃດຄົນນຶ່ງໃນຄອບຄົວຂອງທ່ານບໍ່ຍອມໃຫ້ສິດຫລືອະນຸຍາດໃຫ້ໃຊ້ຂໍ້ມູນສ່ວນຕົວຂອງຜູ້ກ່ຽວ ຈຶ່ງໃຫ້ທ່ານຢ່າຕອບຄຳຖາມ ຫລືໃຫ້ທ່ານຈຶ່ງວ່າງໄວ້ຄືເກົ່າ. ຖ້າທ່ານເປັນພໍ່ແມ່ຫລືເປັນຜູ້ປົກຄອງດູແລເດັກດັ່ງກ່າວ ໃຫ້ທ່ານເປັນຜູ້ໃຫ້ຄຳຕອບຕາງເດັກດັ່ງກ່າວໄດ້.

ຖ້າມີສະມາສິກຄົນໃນຄົນນຶ່ງໃນຄອບຄົວທ່ານມີຈຸດປະສົງຢາກປ່ຽນແປງຄຳຕອບຂອງຜູ້ກ່ຽວຫລັງຈາກຜູ້ໄດ້ໃຫ້ຄຳຕອບໄປຮຽບຮ້ອຍແລ້ວ ແຕ່ວ່າຜູ້ກ່ຽວບໍ່ໄດ້ໃຫ້ຄຳຕອບຕໍ່ຄຳຖາມ ດັ່ງກ່າວ, ໃຫ້ຂຽນຈົດໝາຍແນະນຳໃຫ້ທາງສະຖິຕິສຳມະໂນຄົວການາດາ ໂດຍໃສ່ທີ່ຢູ່ດັ່ງນີ້:
Coordinator, Access to Information and Privacy, Statistics Canada, 120 Parkdale Avenue. Ottawa, ON, K1A 0T6.

## ຂັ້ນທີ່ຫົກ (F)

**ຄຳຖາມໃນຂັ້ນທີ່ຫົກ (ຈາກຄຳຖາມຂໍ້ H1 ຫາ H8):** ເປັນຄຳຖາມຈະບອກໃຫ້ພວກເຮົາຮູ້ກ່ຽວກັບຂໍ້ມູນດ້ານການພັດທະນາປຸກສ້າງເຮືອນແລະຕຶກອາຄານຕ່າງ ໆ, ສະນັ້ນພວກເຈົ້າໜ້າທີ່ຈັດຕຽມໂຄງການ ຫລືພວກທີ່ມີໜ້າທີ່ວາງແຜນພັດທະນາຂອງລັດຖະບານແລະຂອງບໍລິສັດກໍ່ສ້າງພັດທະນາສ້າງຕັ້ງຕຶກ ອາຄານ ແລະເຮືອນໃນເຂດທ້ອງກິ່ນຕ່າງ ໆ ໃນປະເທດການາດາ ຕ້ອງໃຊ້ຈຂໍ້ມູນຈາກຄຳຖາມຂໍ້ນີ້ເປັນສິ່ງສຳຄັນ ເພື່ອໃຫ້ຖືກຕ້ອງຕາມກົດໝາຍຂອງການປຸກສ້າງເຮືອນ ແລະກົດໝາຍຂອງການຊື້ຂາຍເຮືອນໃນປະເທດການາດາ.

ນອກຈາກນັ້ນ ພວກກໍ່ສ້າງເຮືອນແລະຕຶກອາຄານການເພື່ອທຸລະກິດຕ່າງ ໆ ຕ້ອງໃຊ້ຂໍ່ມູນກ່ຽວກັບຈຳນວນຫ້ອງຮັບແຂກ ແລະ ຫ້ອງນອນ ຮ່ວມກັບຈຳນວນຄົນຜູ້ທີ່ຈະອາໄສຢູ່ໃນເຮືອນແຕ່ລະຫລັງ ພ້ອມການວິໃຈແລະສຳຫລວດດ້ານການຄອງຊີບແລະລະດັບເສດຖະກິດຂອງແຕ່ລະຄອບ ຄົວຢູ່ໃນເຂດແລະແຂວງຕ່າງກັນໃຫ້ຖືກຕ້ອງແລະເໝາະສົມ.

ທາງລັດຖະບານແຂວງ ແລະລັດຖະບານເມືອງແລະທ້ອງກິ່ນກໍ່ຕ້ອງການໃຊ້ຂໍ້ມູນຈາກຄຳຖາມດັ່ງກ່າວຂ້າງເທິງນີ້ເພື່ອການວັດແທກລະດັບຊັ້ນຫລືຖານະການຄອງຊີບ ແລະຄວາມແໜ້ນໜາ ຫລືຈຳນວນຄົນອາໄສຢູ່ໃນແຕ່ລະຄອບຄົວນ້ອຍຫລາຍພຽງໃດ ກ່ອນຈະວາງໂຄງການພັດທະນາປຸກສ້າງເຮືອນໃໝ່ຂຶ້ນຢູ່ໃນແຕະລະເມືອງແລະເຂດແຂວງ. ນອກຈາກນັ້ນ, ຕ້ອງການໃຊ້ຂໍ້ມູນກ່ຽວກັບອາຍຸຂອງເຮືອນແຕ່ລະຫລັງ ແລະ ຕ້ອງມີການຈັດຕຽມສິ່ງຂອງທີ່ຈະໃຊ້ໃນການສ້ອມແປງແລະຂະຍ່າຍເພີ້ມທີ່ຕ້ອງການສຳຫລັບເຮືອນຈຳນວນດັ່ງກ່າວໃຫ້ມີຄຸນນະພາບດີຂຶ້ນຢູ່ໃນເຂດທ້ອງກິ່ນຕ່າງ ໆ ໃນປະເທດການາດາ.